**<u>ແຜນການສອນ</u>**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 27 ມີຖຸນາ 2010 (06-27-2010)**

# ເວລາຕັດສິນໃຈຜິດ

**<u>ຂໍ້ພຣະຄັມພີໃນບົດຮຽນ</u>:** (1 ຊາມູເອນ 8:6-9; 12:13-25)

## <u>ເປົ້າໝາຍຂອງບົດຮຽນ:</u>

ບົດຮຽນນີ້ ແມ່ນກ່ຽວກັບການຂໍຮ້ອງເອົາກະສັດ ແລະຜົນສະທ້ອນຂອງການຕັດສິນໃຈຂອງຊົນຊາດອິສຣາເອນ. ສຸດທ້າຍພຣະເຈົ້າກໍໄດ້ຊົງປະທານກະສັດໃຫ້ພວກເຂົາ ແຕ່ວ່າພຣະອົງຍັງເປັນຜູ້ບົ່ງການຢູ່.

## <u>ຄວາມສຳຄັນຂອງບົດຮຽນ:</u>

ບາງເທື່ອພວກເຮົາກໍໄດ້ຕັດສິນໃຈຜິດຄືກັນ ແຕ່ພຣະເຈົ້າຍັງສາມາດທຳງານຢູ່ໃນຖ້າມກາງພວກເຮົາ ແລະຜ່ານພວກເຮົາ. ພຣະອົງຍັງຊົງຍຶດໝັ້ນ ພັນທະສັນຍາ ໃນຄວາມສຳພັນຂອງພຣະອົງກັບພວກເຮົາ ແລະຍັງຊົງມີຄວາມໝັ້ນຄົງຢູ່.

## <u>ຜົນສະທ້ອນຕໍ່ຊີວິດ:</u>

ບົດຮຽນນີ້ຈະຊ່ອຍພວກເຮົາໃຫ້ມີຄວາມໝັ້ນໃຈ ແກ່ທ່ານວ່າຄວາມເຊື່ອໝັ້ນຂອງພຣະເຈົ້າ ຍັງດຳເນີນຕໍ່ ຢູ່ໃນຖ້າມກາງ ຜູ້ທີ່ຕິດຕາມພຣະອົງ, ທັງໆ ຜູ້ນັ້ນຕັດສິນໃຈຜິດ.

## <u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

## <u>ແນະນຳ:</u>

- ບົດຮຽນໃນມື້ນີ້, ຈະຊ່ອຍໃຫ້ພວກເຮົາເຂົ້າໃຈ ທີ່ພວກເຮົາທຸກຄົນໄດ້ຕັດສິນໃຈຜິດ,ແຕ່ພຣະອົງ ກໍຍັງມີພຣະ ພຣະປະສົງທີ່ຈະທຳງານຖ້າມກາງພວກເຮົາ ແລະຜ່ານທາງພວກເຮົາຢູ່.
- ແມ່ນອັນໃດແດ່ທີ່ເປັນຕົວຢ່າງໃນການຕັດສິນໃຈຜິດໂດຍບັງເອີນ, ໂດຍບໍ່ໄດ້ຕັ້ງໃຈ, ບໍ່ໄດ້ຄິດ ແລະການຕັດ ສິນໃຈຜິດຈຸດປະສົງ?
- ພວກເຮົາຄວນຈະຕອບສນອງຕໍ່ພຶດຕິການເຫລົ່ານີ້ໃຫ້ເໝາະສົມໄດ້ຢ່າງໃດ?
- ພຣະເຈົ້າອາດຊົງໃຊ້ສະພາບການຕ່າງໆເຫລົ່ານີ້ເພື່ອເປັນການເຕືອນພວກເຮົາໂດຍຣິດອຳນາດອັນຍິ່ງໃຫຍ່ ຂອງພຣະອົງແນວໃດແດ່?

**1.<u>ເອົາສິ່ງທີ່ຂ້ອຍຕ້ອງການໃຫ້ຂ້ອຍແດ່:</u>** (1 ຊາມູເອນ 8:6-9)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ຊາມູເອນ 8:6-9
- ຈົ່ງເລົ່າເຣື່ອງຊີວິດຕອນເປັນໜຸ່ມຂອງທ່ານທີ່ຢາກໄດ້ຢ່າງບ້າບໍ (ຫລາຍທີ່ສຸດ)..ນັ້ນມີຫຍັງແດ່?
- ພຣະເຈົ້າຊົງມີອຳນາດທີ່ຈະເອົາໃຫ້ພວກເຮົາທຸກໆສິ່ງທີ່ພວກເຮົາທູນຂໍ. ຢ່າງໃດກໍຕາມ, ພຣະອົງຊົງຮູ້ຈັກວ່າແມ່ນຫຍັງເປັນສິ່ງທີ່ດີສຳລັບພວກເຮົາ ແລະເລືອກທີ່ຈະໃຫ້ແກ່ພວກເຮົາ ແລະຕອບການອະທິຖານຂອງພວກເຮົາດ້ວຍຄຳວ່າ "ບໍ່".
- ຊີວິດຂອງທ່ານຈະມີຄວາມແຕກຕ່າງຢ່າງໃດ ຖ້າຫາກພຣະເຈົ້າຕອບຄຳອະທິຖານຂອງທ່ານທຸກຢ່າງ ທຸກຄັ້ງໂດຍຄຳວ່າ "ຕົກລົງ"?
  ໃນການອະທິຖານຂອງພວກເຮົາທີ່ມີຄວາມປາຖນາຕ່າງໆ ແລະພວກເຮົາກໍອະທິຖານທູນຂໍໃຫ້ເປັນໄປຕາມ
- ນ້ຳພຣະທັຍພຣະເຈົ້າທຸກຢ່າງຈະເປັນແນວໃດ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (1 ຊາມູເອນ 8:6-9)

1. ໃນການທູນຂໍຂອງທ່ານທີ່ຜ່ານມານັ້ນມີສິ່ງໃດທີ່ພຣະເຈົ້າຕອບທ່ານວ່າ "ບໍ່"?
   ແລ້ວທ່ານໄດ້ມີຄວາມຮູ້ສຶກແນວໃດ ຫລື ເຮັດແນວໃດຕໍ່ຄຳຕອບນັ້ນ? ທ່ານມີຄວາມເຊື່ອໄວ້ວາງໃຈບໍ່ວ່າພຣະເຈົ້າຮູ້ວ່າສິ່ງໃດດີທີ່ສຸດສຳລັບທ່ານ?
2. ທ່ານໄດ້ພິຈາຣະນາບໍ່ວ່າໃນຊີວິດຂອງທ່ານ ໃນເວລາທີ່ທ່ານເວົ້າວ່າ "ບໍ່" ຕໍ່ຜູ້ໃດຜູ້ນຶ່ງທີ່ປາຖນາຢາກໄດ້ຍິນຄຳວ່າ ໂອເຄ, ຕົກລົງ ຈາກທ່ານ; ທາງທີ່ດີເປັນຫຍັງບໍ່ເວົ້າວ່າຕົກລົງ?
3. ການອະທິຖານຂອງພວກເຮົາຄວນຈະໃຫ້ເປັນໄປຕາມພຣະປະສົງຂອງພຣະເຈົ້າຜູ້ຢູ່ເໜືອພວກເຮົາ ຄວາມປາຖນາ ຄວາມຕ້ອງການຂອງພວກເຮົານັ້ນເປັນແນວໃດ?
4. ເພງສັຣເສີນບົດທີ 5:1-3 ສອນໃຫ້ພວກເຮົາອະທິຖານຢ່າງຄວາມອົດທົນ, ໃນລັກສະນະນີ້ແມ່ນບໍ່?

**1.<u>ຜົນສະທ້ອນໃນການເລືອກຂອງເຮົາ:</u>** (12:13-19)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ຊາມູເອນ 12:13-19
- ໃຫ້ບອກນັກຮຽນອີກເທື່ອນຶ່ງວ່າ ຊາມູເອນໄດ້ເຕືອນພວກອິສຣາເອນ ເຣື່ອງຄວາມບາບຂອງເຂົາ ໃນເວລາເຂົາເຈົ້າຮ້ອງຂໍເອົາເຈົ້າຊີວິດແລ້ວ ເຂົາເຈົ້າຮູ້ແລ້ວວ່າແມ່ນອັນໃດດີທີ່ສຸດ, ແຕ່ເຂົາຍັງບໍ່ລົດລະໃນການຮຽກຮ້ອງຢູ່. ເປັນເພາະເຫດໃດ ພຣະເຈົ້າຈຶ່ງໃຫ້ຕາມທີ່ເຂົາທູນຂໍ ທັງໆ ທີ່ພຣະອົງຮູ້ວ່າສິ່ງນັ້ນບໍ່ແມ່ນສິ່ງທີ່ດີ ແລະໜ້າສົນໃຈແກ່ເຂົາ? ພຣະເຈົ້າໄດ້ເຮັດເໝືອນສິ່ງເຫລົ່ານັ້ນແກ່ພວກເຮົາຢູ່ບໍ່?
- ເລົ່າເຣື່ອງ ຊີວິດຂອງທ່ານເອງ ໃນເວລາທີ່ທ່ານໄດ້ເລືອກເອົາທາງທີ່ຂັດກັບແຜນການຂອງພຣະເຈົ້າ. ແລ້ວມາເວົ້າເຣື່ອງການທີ່ທ່ານກັບມາຮັບເອົາການຕິດຕາມພຣະອົງ.
- ເປັນດ້ວຍເຫດໃດພຣະເຈົ້າຈຶ່ງບໍ່ເອົາພະເຈົ້າຂອງເຂົາອອກໄປ ໃນເວລາທີ່ເຂົາເຈົ້າກະທຳຜິດບາບ ແລະຍອມຢູ່ໃຕ້ອຳນາດຂອງມັນ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (1 ຊາມູເອນ 12:13-19)

1. ໃນເມື່ອຊົນຊາດອິສຣາເອນພາກັນເລືອກເອົາທາງຜິດ ພຣະເຈົ້າປ່ອຍປະເຂົາບໍ່?

2. ໃນເມື່ອພວກເຮົາເລືອກເອົາທາງຜິດ ພຣະເຈົ້າໄດ້ປະຖິ້ມພວກເຮົາບໍ່? ແລ້ວພວກເຮົາຄວນຈະເຮັດແນວໃດ?
3. ທີ່ມີຄວາມເຂົ້າໃນຜົນທີ່ຕາມມາຂອງການເລືອກເອົາຄວາມບາບມານຳພາພວກເຮົານັ້ນເປັນແນວໃດ?
4. ພວກເຮົາຈະບອກຜົນສະທ້ອນຂອງການເລືອກຜິດໃຫ້ກັບຄົນອື່ນໃຫ້ເຂົ້າໃຈໄດ້ຢ່າງໃດ?

3 . <u>ຂໍ້ສລຸບ- ພຣະເຈົ້າຍັງເປັນຜູ້ບົ່ງການ :</u> (1 ຊາມູເອນ 12:20-25 )

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ກິຈການ 1 ຊາມູເອນ 12:20-25
- ບົດສົນທະນາ: ຖ້າຫາກພຣະເຈົ້າຍັງເປັນຜູ້ບົ່ງການຢູ່, ເປັນຫຍັງພວກເຮົາຈຶ່ງບໍ່ສືບຕໍ່ໃນການປະຕິບັດຕາມສິ່ງທີ່ພຣະເຈົ້າບອກ ແລະຕາມພຣະປະສົງຂອງພຣະອົງ?
- ຖ້າຫາກພວກເຮົາບໍ່ຫັນໜີໄປທາງອື່ນ, ພວກເຮົາກໍສາມາດລະງັບວົງຈອນຂອງຄວາມບາບ ແລະກັບມາຫາພຣະເຈົ້າ ແລະທຳຕາມພຣະປະສົງຂອງພຣະອົງໄດ້. ສິ່ງທີ່ພວກເຮົາຕ້ອງທຳຄື: 1. ຫັນກັບ, 2. ເປັນຜູ້ທີ່ຍ້ານຢຳ; 3. ຕິດຕາມ; 4. ນະມັສການ; 5. ອະທິຖານ; 6. ຢຳເກງອົງພຣະຜູ້ເປັນເຈົ້າ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> 1 ຊາມູເອນ 12:20-25

1. ຈະສຶກສາພຣະຄັມພີຢ່າງໃດ, ການອະທິຖານ, ການສາມັກຄີທັມຮ່ວມກັບບັນດາຜູ້ທີ່ເຊື່ອ, ແລະຂຍັນໝັ່ນພຽນຕິດຕາມພຣະເຈົ້າຕໍ່ໄປ ແລ້ວຈະຮູ້ວ່າພຣະເຈົ້າຍັງຊົງຄຸ້ມຄອງພວກເຮົາຢ່າງໃດ?
2. ໃນເມື່ອພວກເຮົາຮູ້ວ່າພວກເຮົາເລືອກທາງຜິດນັ້ນພວກເຮົາຍັງຈະຕ້ອງໄປໂບດ ແລະນະມັສການພຣະເຈົ້າຢູ່ບໍ່?
3. ເປັນຫຍັງຈຶ່ງມີບາງຄົນເລືອກທີ່ຈະຢູ່ຫ່າງໄກຈາກຄຣິສຕຽນ ທັງໆ ທີ່ເຂົາຮູ້ວ່າເຂົາເປັນຄົນຜິດຄົນບາບ?
4. ພວກເຮົາຄວນຈະຊ່ອຍຄົນອື່ນໆ ແນວໃດ ໃນເວລາທີ່ເຂົາເຈົ້າເດີນທາງຫ່າງອອກຈາກແຜນການຂອງພຣະເຈົ້າ?

<u>**ພຣະຄັມພີແຫ່ງຄວາມຈິງ**</u>

- ຢ່າໄດ້ຄຳນຶງເຖິງການເລືອກທາງຜິດຂອງພວກເຮົາທີ່ຜ່ານມາ, ພຣະເຈົ້າຍັງຮັກພວກເຮົາ ແລະຍັງຮັກສາສາຍສັມພັນກັບພວກເຮົາຢ່າງໝັ້ນຄົງ.
- ພຣະເຈົ້າຊົງມີແຜນການທີ່ດີທີ່ສຸດສຳລັບພວກເຮົາ. ພວກເຮົາບໍ່ຄວນອຽງໄປຫາສິ່ງອື່ນ. ສິ່ງທີ່ພວກເຮົາຕ້ອງການນັ້ນອາດບໍ່ແມ່ນຄວາມປາຖນາຂອງພຣະເຈົ້າທີ່ໃຫ້ສຳລັບພວກເຮົາ.
- ແມ້ກະທັ້ງພວກເຮົາເປັນຄົນເຮັດຜິດບາບ. ພວກເຮົາກໍຍັງສາມາດສາຣະພາບ ແລະກັບຄືນມາຫາພຣະເຈົ້າແລະພຣະອົງຈະປະຖິ້ມພວກເຮົາ.
- ພຣະເຈົ້າຍັງອະພັຍໃຫ້ພວກເຮົາຢູ່ສເມີ, ພວກເຮົາອາດຍັງປະເຊີນໜ້າກັບຜົນຄວາມບາບຂອງພວກເຮົາຢູ່ກໍຕາມ.
- ພຣະເຈົ້າຍັງທຳງານຜ່ານການເລືອກຂອງພວກເຮົາຕາມພຣະປະສົງຂອງພຣະອົງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**